# ຄວາມຍືນຍົງຂອງການຜະລິດພືດທັນຍາຫານຢູ່ເຂດເນີນສູງ ໂດຍການປູກຖົ່ວແຮປະສົມ

ໂຄງການ ລະບົບການ ຜະລິດ ກະສິກຳທີ່ປັບຕົວ ໄປຕາມດິນຟ້າອາກາດ ແລະ ສິ່ງແວດລ້ອມ

EFICAS project





## ຖົ່ວແຮ : ເປັນພືດປູກປະສົມຊະນິດໜຶ່ງທີ່ມີປະໂຫຍດແກ່ຊາວກະສິກອນ

ໃນທ່າມກາງຄວາມບໍ່ແນ່ນອນລາຄາສິນຄ້າຕ່າງໆ ແລະ ດິນຟ້າອາກາດປ່ຽນແປງ ການປູກພືດປະສົມປະສານຫຼາກຫຼາຍຊະນິດຈຶ່ງເປັນຫຼັກຊັບຄໍ້າປະກັນທີ່ສຳຄັນໜຶ່ງແກ່ຊາວກະສິກອນ. ຖົ່ວແຮ (*Cajanus cajan*) ແມ່ນພືດຕະກູນຖົ່ວປະເພດໜຶ່ງທີ່ຄົນ ແລະ ສັດສາມາດບໍລິໂພກ ແລະ ກິນແທນອາຫານໄດ້ ແລະ ລວມທັງການຜະລິດຄັ່ງ ຫຼື ແມ່ຄັ່ງ ພ້ອມດຽວກັນນີ້ຖົ່ວແຮຍັງສາມາດເປັນພືດທີ່ໃຫ້ຮົ່ມ, ເປັນພືດຄຸມດິນ ຫຼື ປ້ອງກັນລົມໄດ້. ຫຼັງຈາກປູກແລ້ວ, ຖົ່ວແຮຍັງສາມາດປັບປຸງດິນ ຈາກຮາກຖົ່ວແຮທີ່ດູດເອົາທາດ ອາຊົດດ້ວຍ *Rhizobium* ແລະ ໃບຖົ່ວແຮທີ່ຫຼົ່ນລົງສາມາດກາຍເປັນເສດພືດປົກຄຸມດິນ. ຖົ່ວແຮສາມາດປູກໄດ້ຮອບວຽນດຽວ, ປູກໝູນວຽນ ແລະ ປະສົມປະສານກັບພືດທັນຍາຫານຫຼັກເຊັ່ນ: ເຂົ້າ, ສາລີ ຫຼື ໝາກເດືອຍ ໂດຍປູກແຜ່ຫຼາຍຢູ່ເຂດພາກເໜືອຂອງປະເທດລາວ. ໃນປີ 2015 ໂຄງການ EFICAS ໄດ້ສະໜັບສະໜູນ ການປູກຖົ່ວແຮ ຢູ່ໃນ 7 ບ້ານ.

## ວິທີປູກ ແລະ ບົວລະບັດຮັກສາຖົ່ວແຮ

ຖົ່ວແຮເປັນພືດຢືນຕົ້ນລຳຕົ້ນຊື່ ເປັນພູ່ມ ມີອາຍຸ 1-5 ປີ ສາມາດປູກປະສົມກັບພືດປະເພດທາດແປ້ງເຊັ່ນ: ເຂົ້າ, ສາລີ ຫຼື ໝາກເດືອຍ ພ້ອມດຽວກັນໄດ້ ຫຼືຈະປູກຫຼັງຈາກເສຍຫຍ້າຄັ້ງທຳອິດ (ປະມານ 15 ຫາ 25 ວັນ ຫຼັງຈາກປູກພືດຫຼັກແລ້ວ) ໄລຍະຫ່າງການປູກແມ່ນອີງຕາມຄວາມເໝາະສົມຂອງພືດຫຼັກ: 2-3 ກລ/ຮຕ (ຂະໜາດທີ່ປູກ 2 ມ x 2 ມ) ປ່ອຍຄັ່ງໄດ້ 20-25 ກລ/ຮຕ (ປູກຕາມຫວ່າງແຖວຂອງສາລີ ຫຼື ໝາກເດືອຍ ຂະນາດ 75 ຊມ x 40 ຊມ) ເພື່ອປັບປຸງດິນ ແລະ ເຮັດໃຫ້ຜົນຜະລິດແກ່ນໄດ້ຮັບຜົນດີ. ໄລຍະຖົ່ວແຮອອກດອກ ແລະ ເກັບແກ່ນແມ່ນແຕກຕ່າງກັນຕາມແນວພັນ (ແນວພັນເກັບກ່ຽວໄວ ຫຼື ຊ້າ) ໂດຍທົ່ວໄປແລ້ວຖ້າໃຊ້ແນວພັນລາວຫຼື ແນວພັນອຸບົນຈາກປະເທດໄທແມ່ນສາມາດເກັບກ່ຽວໄດ້ໃນເດືອນ ທັນວາ ຫາ ເດືອນເມສາ. ໃນປີ 2015, ໂຄງການໄດ້ສະໜອງແນວພັນຖົ່ວແຮທັງໝົດ 318 ກິໂລກຣາມໃຫ້ຊາວກະສິກອນປູກໃນເນື້ອທີ່ທັງໝົດປະມານ 72.89 ເຮັກຕາ.

## ຜົນປະໂຫຍດຈາກການປູກຖົ່ວແຮ

- **ປູກເພື່ອບໍລິໂພກ ຫຼື ຂາຍ**

ການປູກແມ່ນແຕກຕ່າງກັນຕາມໄລຍະຫ່າງຂອງການປູກ ແລະ ການບົວລະບັດຮັກສາຕົ້ນຖົ່ວແຮ, ຄວບຄຸມສັດຕູພືດ (ຖົ່ວແຮງ່າຍຕໍ່ບົ້ງເຈາະ ແລະ ໝາກຫຼົ່ນໄວ) ແລະ ວິທີການເກັບກ່ຽວ (ເກັບກ່ຽວຫຼາຍເທື່ອອີງໃສ່ການອອກດອກ ຫຼື ເກັບກ່ຽວເທື່ອດຽວເມື່ອອອກດອກໝົດ). ເພາະສະນັ້ນ ຢູເຂດເນີນສູງພາກເໜືອ ຜົນຜະລິດເກັບກ່ຽວແມ່ນແຕກຕ່າງກັນຈາກ 0.4 ຫາ 1.6 ໂຕນ/ເຮັກຕາ. ແກ່ນຖົ່ວແຮໃຫ້ຄຸນຄ່າທາງໂພຊະນາການສູງ (ບັນຈຸໂປຣຕີນ 24%) ແລະ ບໍລິໂພກຢ່າງແຜ່ຫຼາຍທົ່ວໂລກ ( ໂດຍສະເພາະແມ່ນຢູ່ປະເທດອິນເດຍ). ນອກຈາກນີ້, ຖົ່ວແຮຍັງສາມາດປະສົມກັບອາຫານໃຫ້ໝູກິນປະຈຳວັນ ໃນການລ້ຽງໝູທອມ. ມີຫຼາຍບໍລິສັດຊື້-ຂາຍແກ່ນຖົ່ວແຮໃນຂົງເຂດອາຊີຕາເວັນອອກສຽງໃຕ້ ທີ່(ຍົກເວັ້ນພາສີ FOB) ລາຄາເລີ່ມຈາກ 650 ຫາ 750 ໂດລາສະຫະລັດ/ໂຕນ ຢູ່ຕະຫຼາດສາກົນ (*www.alibaba.com*)

- **ການຜະລິດຄັ່ງ**

ລຳຕົ້ນ, ງ່າກິ່ງກ້ານຖົ່ວແຮສາມາດປ່ອຍຄັ່ງໃສ່ໄດ້ ເພື່ອຜະລິດຄັ່ງ. ຜົນຜະລິດຄັ່ງມີຄວາມແຕກຕ່າງກັນໄປຕາມໄລຍະຫ່າງຄວາມໜາແໜ້ນຂອງການປູກຖົ່ວແຮ, ວິທີການປ່ອຍຄັ່ງ, ປັດໄຈພາຍນອກຕ່າງໆ ( ຕົວຢ່າງ: ຕາມສະພາບເງື່ອນໄຂຂອງດິນຟ້າອາກາດແຕ່ລະທ້ອງຖິ່ນ, ການປ່ອຍສັດຊະຊາຍ, ສັດຕູພືດທຳລາຍ) ແລະ ວິທີການເກັບກ່ຽວ. ຜົນຜະລິດຄັ່ງປຽກຈະຢູ່ໃນລະຫວ່າງ 500 ຫາ 4,000 ກິໂລ/ເຮັກຕາ, ລາຄາຜົນຜະລິດຄັ່ງແຫ້ງ 18,000 ຫາ 45,000 ກີບຕໍ່ກິໂລ (ໃນປີ 2014). ໃນປີ 2015, ທາງໂຄງການໄດ້ສະໜອງແນວພັນຄັ່ງໃຫ້ບ້ານເປົ້າໝາຍ 3 ບ້ານ, ຈຳນວນ 30 ກິໂລ.

- **ການປັບປຸງຄວາມອຸດົມສົມບູນຂອງດິນ**

ຖົ່ວແຮສາມາດປັບປຸງດິນ ຈາກລະບົບຮາກຖົ່ວແຮທີ່ແຜ່ກະຈາຍອອກສາມາດດູດຊຶບເອົາທາດ ອາຊົດ(ໄນໂຕຼເຈນ)ໂດຍເຊື້ອຈຸລິນຊີໄຣໂຊບຽມ (Rhizobium) (40 ຫາ 90 ກິໂລ ຂອງ N ຕໍ່ 1 ເຮັກຕາ ຕໍ່ປີ ທີ່ເປັນປະໂຫຍດແກ່ການປູກພືດທາດແປ້ງໃນປີຕໍ່ໄປໄດ້) ແລະ ໃບຖົ່ວແຮທີ່ຫຼົ່ນລົງສາມາດຮັກສາຄວາມຊຸ່ມໃນດິນ ແລະ ຄຸມຫຍ້າໄດ້.















## ຂໍ້ຫຍຸ້ງຍາກ ທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ແລະ ແນວທາງທີ່ເປັນໄປໄດ້ທີ່ຈະເອົາຊະນະກັບມັນ

- **ການບໍລິໂພກຖົ່ວແຮຂອງມະນຸດຍັງເປັນຂໍ້ຈຳກັດ**

ເຖິງແມ່ນວ່າ ຖົ່ວແຮຈະເປັນພືດທີ່ໃຫ້ຄຸນຄ່າທາງດ້ານໂພຊະນາການ ແລະ ມີລົດຊາດດີກໍ່ຕາມ ແຕ່ການບໍລິໂພກຖົ່ວແຮຢູ່ ສປປລາວຍັງມີຂໍ້ຈຳກັດຢູ່. ບັນດາໂຄງການຕ່າງໆທີ່ສົ່ງເສີມປູກຖົ່ວແຮຕ້ອງເນັ້ນໃຫ້ເຫັນຄຸນປະໂຫຍດຫຼາຍຢ່າງຂອງຖົ່ວແຮ (ຜົນຜະລິດແກ່ນຖົ່ວແຮສາມາດບໍລິໂພກ ຫຼື ຂາຍ ແລະ ປ່ອຍຄັ່ງໄດ້). ການບໍລິໂພກຖົ່ວແຮສາມາດສົ່ງເສີມໃນການປັບປຸງໂຄງການທາງໂພຊະນາການໂດຍຜ່ານ ຕົວຢ່າງເຊັ່ນ: ການທົດລອງລົດຊາດການປຸງແຕ່ງຖົ່ວແຮ ຫຼື ການແຂ່ງຂັນການປຸງແຕ່ງຕາມທ້ອງ ຖິ່ນ ເປັນຕົ້ນ.

- **ໂອກາດທາງຕະຫຼາດ, ການຂຶ້ນ-ລົງ ຂອງລາຄາ ແລະ ປະລິມານ**

ຕະຫຼາດສຳລັບຮອງຮັບແກ່ນຖົ່ວແຮຢູ່ ສ.ປ.ປ ລາວ ຍັງຈຳກັດເນື່ອງຈາກຂາດການເຊື່ອມໂຍງກັບຜູ້ຜະລິດກັບຕະຫຼາດພາກພື້ນ, ຄວາມຕ້ອງການ ແລະ ລາຄາຂອງຄັ່ງມີການປ່ຽນແປງສູງໃນແຕ່ລະປີ. ໂຄງການສົ່ງເສີມການປູກຖົ່ວແຮຫຼາຍໂຄງການຄວນຊຸກຍູ້ສົ່ງເສີມດ້ານເທັກນິກວິຊາການ (ນັບແຕ່ການລິເລີ່ມປູກພືດ, ປ່ອຍແມ່ຄັ່ງຕະ ຫຼອດເຖິງການບົວລະບັດຮັກສາບໍ່ໃຫ້ແມງໄມ້ທຳລາຍແມ່ຄັ່ງ)ອຳນວຍຄວາມສະດວກຂະຫຍາຍຕະຫຼາດ ( ແກ່ນຖົ່ວແຮ , ຄັ່ງ) ໃຫ້ແກ່ພໍ່ຄ້າໃນລະດັບພາກພື້ນ ແລະ ທ້ອງຖິ່ນ ລວມທັງການຂະຫຍາຍຕົວແທນ ຊື້-ຂາຍ ແລະ ສູນບໍລິການດ້ານເທັກນິກຕ່າງໆ

- **ສັດຕູພືດທຳລາຍ**

ຖົ່ວແຮເປັນພືດບໍ່ທົນທານຕໍ່ກັບການທຳລາຍຂອງສັດຕູພືດ ແລະ ໝາກຫຼົ່ນໄວ. ແມ່ນຄັ່ງກໍ່ບໍ່ມີຄວາມທົນທານຕໍ່ກັບການທຳລາຍຂອງມົດ, ໂຕເຮືອດ ແລະ ບົ້ງ. ວິທີການຄວບຄຸມສັດຕູພືດແບບປະສົມປະສານ ລວມທັງການໃຊ້ສະໝູນໄພຂັບໄລ່ແມງໄມ້ແບບທຳມະຊາດ ແລະ ຢາຂ້າແມງໄມ້ຊີວະພາບ ທີ່ປະສົມປະສານກັນເພື່ອຮັບປະກັນໃຫ້ແກ່ການປູກຖົ່ວແຮ ໄດ້ຮັບຜົນຜະລິດທັງແກ່ນຖົ່ວແຮ ແລະ ຄັ່ງ.

cirad
EUROPEAN UNION